ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງຫຼວງນໍ້າທາ

ພະແນກ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ

ເລກທີ 15/ພຊສ

ຫຼວງນໍ້າທາ, ວັນທີ 18.03.2014

# ໃບຢັ້ງຢືນດ້ານສິ່ງແວດລ້ອມ

- ອີງຕາມ: ກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ, ສະບັບເລກທີ 29/ສພຊ, ວັນທີ 18/12/2012.
- ອີງຕາມ: ຄໍາແນະນໍາຂະບວນການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ສະບັບເລກທີ 8029/ກຊສ, ລົງວັນທີ 17/12/2013.

## ຫົວໜ້າ ພະແນກ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມແຂວງ ປະທານຄະນະກໍາມະການສິ່ງແວດລ້ອມ ແຂວງຫຼວງນໍ້າທາ ຕົກລົງເຫັນດີ

1. ຮັບຮອງເອົາບົດລາຍງານການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຂອງໂຄງການ ຊົນລະປະທານ ນໍ້າບັກ ບ້ານ ນໍ້າບັກໂພນຄໍາ, ເມືອງລອງ, ສະບັບເດືອນ ມີນາ ປີ 2014 ຂອງ ພະແນກກະສິກໍາ ແລະ ປ່າໄມ້ແຂວງຫຼວງນໍ້າທາ ໂດຍໃຫ້ຜູ້ພັດທະນາໂຄງການ ປະຕິບັດຕາມເງື່ອນໄຂ ແລະ ພັນທະທີ່ລະບຸໄວ້ ດ້ານຫລັງ ຂອງໃບຢັ້ງຢືນ ສະບັບນີ້.
2. ມອບໃຫ້ ພະແນກ ແລະ ຫ້ອງການ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເມືອງລອງ ສົມທົບກັບຫ້ອງການທີ່ກ່ຽວຂ້ອງ ເຮັດໜ້າທີ່ ຕິດຕາມກວດກາ ການຈັດຕັ້ງປະຕິບັດ ມາດຕະການປ້ອງກັນ ແລະ ຫຼຸດຜ່ອນ ຜົນກະທົບຕໍ່ສິ່ງແວດລ້ອມ ຂອງໂຄງການ ຊົນລະປະທານ ນໍ້າບັກ.

ໃບຢັ້ງຢືນສະບັບນີ້ ມີຜົນນໍາໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າ ພະແນກ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ**

**ປະທານຄະນະກໍາມະການສິ່ງແວດລ້ອມ ແຂວງຫຼວງນໍ້າທາ**

ແຂວງຫລວງນໍ້າທາ ພະແນກ ຊັບພະຍາກອນທໍາມະຊາດ ແລະສິ່ງແວດລ້ອມ

**ຣສຈ.ດຣ.ຄໍາເຫຼັກ ໄຊດາລາ**

<u>ສໍາເນົານໍາສົ່ງ:</u>

| | |
|---|---|
| 1. ພະແນກ ຊສ | 1 ສະບັບ |
| 2. ຫ້ອງການ ຊສ ເມືອງ | 1 ສະບັບ |
| 3. ໂຄງການ | 1 ສະບັບ |
| 4. ສໍາເນົາ | 1 ສະບັບ |